ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1690 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 24 ເມສາ 2026

## ໜັງສືແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ເຂົ້າຮ່ວມຍື່ນຊອງປະມູນ ການຈັດຊື້ອຸປະກອນ ເພື່ອນຳໃຊ້ເຂົ້າໃນກິດຈະກຳສະໂມສອນເດັກຍິງ ຢູ່ 68 ໂຮງຮຽນ ຢູ່ໃນບັນດາເມືອງເປົ້າໝາຍຂອງໂຄງການປັບປຸງພື້ນຖານການຮຽນຮູ້ເດັກ.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນ ທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນໃນຄັ້ງນີ້ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນການປະມູນໄດ້. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ເຂົ້າເບິ່ງເອກະສານປະມູນທີ່ ກົມແຜນການ, ກະຊວງສຶກສາທິການ ແລະ ກິລາ. ຊັ້ນ 3 (ຕຶກ A1) ຫ້ອງ 309 ເບີໂທຕິດຕໍ່: 020 9142 9451, 020 7798 9988 ແລະ 020 54945562 ໃນເວລາ ລັດຖະການ;
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ ໂດຍຜູ້ທີ່ສົນໃຈປະມູນ ຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດ ເອົາເອກະສານປະມູນ ເລີ່ມແຕ່ວັນທີ 24 ເມສາ 2026 ຫາວັນທີ 26 ພຶດສະພາ 2026 ຢູ່ທີ່ຫ້ອງ 309 (ຕຶກ A1) ກະຊວງສຶກສາທິການ ແລະ ກິລາ ຕາມວັນເວລາລັດຖະການ;
5. ຊອງປະມູນທຸກໆຊອງຈະໄດ້ເປີດໃນວັນທີ 26 ພຶດສະພາ 2026 ເວລາ 13:30 ໂມງ ທີ່ຫ້ອງປະຊຸມຂອງກະຊວງສຶກສາທິການ ແລະ ກິລາ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຫາກຊອງປະມູນໃດສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດຊອງ.
6. ທຸກຊອງປະມູນຕ້ອງມີການຄ້ຳປະກັນດ້ວຍແຊັກ (ວີຊ່າ) ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານຊຶ່ງມີມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີປະມູນ.

ເຊັນແທນ ຫົວໜ້າຫ້ອງການ

ພົມມະສອນ ສີສະອາດ